ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 227/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 23 ມີນາ 2020

# ຂໍ້ຕົກລົງ
# ວ່າດ້ວຍລະບົບສະວິບ ຂອງທະນາຄານແຫ່ງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມບໍລິການທະນາຄານ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ມາດຕະການ ໃນການຄວບຄຸມ ແລະ ການນຳໃຊ້ລະບົບສະວິບ ຂອງທະນາຄານແຫ່ງ ສປປ ລາວ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມປອດໄພ ຖືກຕ້ອງຕາມຂອບເຂດສິດ ແລະ ໜ້າທີ່ຮັບຜິດຊອບ ແນໃສ່ເຮັດໃຫ້ການຄວບຄຸມ ແລະ ການນຳໃຊ້ລະບົບສະວິບ ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ລະບົບສະວິບ**

ລະບົບສະວິບ (Society for Worldwide Interbank Financial Telecommunication = SWIFT) ແມ່ນລະບົບການຮັບ ແລະ ສົ່ງຂໍ້ຄວາມສະວິບ ເພື່ອຢັ້ງຢືນການດຳເນີນທຸລະກຳທາງການເງິນ ແລະ ແລກປ່ຽນຂໍ້ມູນຕ່າງໆ ລະຫວ່າງທະນາຄານແຫ່ງ ສປປ ລາວ ກັບ ສະຖາບັນການເງິນຕົວແທນ ແລະ ສະຖາບັນການເງິນຄູ່ຄ້າທີ່ຢູ່ຕ່າງປະເທດ ຊຶ່ງທະນາຄານແຫ່ງ ສປປ ລາວ ໄດ້ເຊົ່າສິດນຳໃຊ້ຈາກອົງການສະວິບ.

ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຂໍ້ຄວາມສະວິບ (SWIFT Massage)** ໝາຍເຖິງ ການສົ່ງ ແລະ ການຮັບ ເນື້ອໃນຂໍ້ຄວາມ ເພື່ອດໍາເນີນທຸລະກໍາ ຫຼື ຢັ້ງຢືນຂໍ້ມູນ ທາງການເງິນ ແລະ ຂໍ້ມູນຕ່າງໆ ຜ່ານລະບົບສະວິບ;

2. **ສະຖາບັນການເງິນຕົວແທນ** ໝາຍເຖິງ ສະຖາບັນການເງິນຕ່າງປະເທດ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ເປີດບັນຊີເງິນຝາກສະກຸນເງິນຕ່າງປະເທດ, ພັນທະບັດ, ຄໍາ, ໜ່ວຍລົງທຶນ ແລະ ອື່ນໆ ຢູ່ນໍາ;

3. **ສະຖາບັນການເງິນຄູ່ຄ້າ** ໝາຍເຖິງ ສະຖາບັນການເງິນຕ່າງປະເທດ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ເປີດສາຍພົວພັນນໍາ ເພື່ອດໍາເນີນທຸລະກໍາທາງການເງິນ ເປັນຕົ້ນ ຊື້-ຂາຍເງິນຕາຕ່າງປະເທດ, ພັນທະບັດ, ຄໍາ ແລະ ອື່ນໆ;

4. **ອົງການສະວິບ** ໝາຍເຖິງ ອົງການສາກົນ ຊຶ່ງເປັນເຈົ້າຂອງ, ຜູ້ສ້າງ, ພັດທະນາ ແລະ ໃຫ້ບໍລິການລະບົບສະວິບ;

5. **ບັນຊີສະວິບ (SWIFT Account)** ໝາຍເຖິງ ຊື່ບັນຊີ ແລະ ລະຫັດຜ່ານ ທີ່ພະນັກງານຂອງສະມາຊິກສະວິບໃຊ້ເຂົ້າລະບົບສະວິບ ໃນການປະຕິບັດການຄວບຄຸມ ແລະ ນໍາໃຊ້ລະບົບສະວິບ;

6. **ບໍລິສັດທີ່ປຶກສາ** ໝາຍເຖິງ ຜູ້ໃຫ້ບໍລິການຊ່ວຍຕິດຕັ້ງ, ບໍາລຸງຮັກສາ ແລະ ໃຫ້ຄໍາປຶກສາໃນການຄວບຄຸມ ແລະ ນໍາໃຊ້ລະບົບສະວິບ.

ມາດຕາ 4 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ກົມບໍລິການທະນາຄານ.

## ໝວດທີ 2
## ການຄວບຄຸມລະບົບສະວິບ

ມາດຕາ 5 ການຄວບຄຸມລະບົບສະວິບ

ການຄວບຄຸມລະບົບສະວິບ ແມ່ນການຄວບຄຸມ ແລະ ການບໍາລຸງຮັກສາລະບົບສະວິບ ດ້ານເຕັກນິກ ແລະ ເຕັກໂນໂລຊີ ໃຫ້ມີຄວາມປອດໄພ ແລະ ໄດ້ມາດຕະຖານ ຕາມການກໍານົດຂອງອົງການສະວິບ ແລະ ມາດຕະຖານອື່ນທີ່ກ່ຽວຂ້ອງ.

ການຄວບຄຸມລະບົບສະວິບ ຕ້ອງດໍາເນີນໃນໂມງລັດຖະການ, ກໍລະນີມີຄວາມຈໍາເປັນຕ້ອງຄວບຄຸມລະບົບນອກໂມງລັດຖະການ ຕ້ອງໄດ້ຮັບອະນຸຍາດຈາກ ຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບສູງສຸດ ຫຼື ຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບ. ການດໍາເນີນການຕິດຕັ້ງ, ບໍາລຸງຮັກສາ ຫຼື ການເຄື່ອນໄຫວອື່ນໃນການຄວບຄຸມລະບົບສະວິບ ຕ້ອງມີການເຂົ້າຮ່ວມຢ່າງໜ້ອຍ ຂອງຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບ ແລະ ພະນັກງານຜູ້ຄວບຄຸມລະບົບສະວິບ.

ມາດຕາ 6 ສິດ ແລະ ໜ້າທີ່ ຂອງຜູ້ຄວບຄຸມລະບົບສະວິບ

ກົມເຕັກໂນໂລຊີຂໍ້ມູນຂ່າວສານ ເປັນຜູ້ຄວບຄຸມລະບົບສະວິບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕັ້ງ, ກວດສອບ, ປັບປຸງ ແລະ ບໍາລຸງຮັກສາລະບົບສະວິບ ດ້ານເຕັກນິກ ແລະ ເຕັກໂນໂລຊີ ດ້ວຍຕົນເອງ ແລະ/ຫຼື ປະສານສົມທົບກັບ ອົງການສະວິບ ແລະ/ຫຼື ບໍລິສັດທີ່ປຶກສາ ໃຫ້ມີຄວາມປອດໄພ ແລະ ໄດ້ມາດຕະ

ຖານຕາມການກຳນົດຂອງອົງການສະວິບ ແລະ ມາດຕະຖານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ໜ່ວຍແມ່ຂ່າຍ (Server), ຖານຂໍ້ມູນ (Data Base), ການປ້ອງກັນອາຊະຍາກຳທາງລະບົບຄອມພິວເຕີ (Cyber Attack), ການຄຸ້ມຄອງວັດຖຸເຕັກນິກ ແລະ ອຸປະກອນຕ່າງໆທີ່ຕິດພັນກັບການຄວບຄຸມ ແລະ ການນຳໃຊ້ລະບົບສະວິບ;

2. ແຕ່ງຕັ້ງ ແລະ ປັບປຸງ ຄະນະຮັບຜິດຊອບຄວບຄຸມລະບົບສະວິບ;

3. ຄົ້ນຄວ້າສ້າງລະບຽບການ ເພື່ອນຳໃຊ້ໃນການຕິດຕັ້ງ, ກວດສອບ ແລະ ບຳລຸງຮັກສາລະບົບສະວິບ;

4. ຮັກສາ ແລະ ປ້ອງກັນ ຂໍ້ມູນທີ່ຕິດພັນກັບການຄວບຄຸມລະບົບສະວິບໃຫ້ເປັນຄວາມລັບ ຊຶ່ງການເປີດເຜີຍຂໍ້ມູນໃຫ້ພາກສ່ວນພາຍນອກ ຕ້ອງໄດ້ຮັບການເຫັນດີຈາກຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ;

5. ປະເມີນ ແລະ ຕອບຄຳຖາມອົງການສະວິບ ກ່ຽວກັບການປະຕິບັດມາດຕະຖານການຄວບຄຸມລະບົບສະວິບ ເປັນຕົ້ນ ແບບສອບຖາມປະເມີນການຄວບຄຸມລະບົບສະວິບ (KYC Attestation) ແລະ ມາດຕະຖານອື່ນ ທີ່ກ່ຽວຂ້ອງໃນແຕ່ລະໄລຍະ;

6. ໃຫ້ການຮ່ວມມື ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບລະບົບສະວິບ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;

7. ສະເໜີຊຳລະຄ່າເຊົ່າ ແລະ ຄ່າບໍລິການຕ່າງໆ ໃຫ້ອົງການສະວິບ ແລະ/ຫຼື ບໍລິສັດທີ່ປຶກສາ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການເຫັນດີຂອງຂັ້ນເທິງ.

### ມາດຕາ 7 ຄະນະຮັບຜິດຊອບຄວບຄຸມລະບົບສະວິບ

ຄະນະຮັບຜິດຊອບຄວບຄຸມລະບົບສະວິບ ຖືກແຕ່ງຕັ້ງໂດຍຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ ຊຶ່ງປະກອບມີ:

1. ຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບສູງສຸດ (Super Administrator) ແມ່ນຄະນະກົມຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ ເປັນຫົວໜ້າຄະນະ;

2. ຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບ (System Administrator) ແມ່ນຄະນະກົມ ຫຼື ຄະນະພະແນກ ຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ ເປັນຮອງຄະນະ;

3. ພະນັກງານຜູ້ຄວບຄຸມລະບົບສະວິບ (System User) ແມ່ນຄະນະພະແນກ ຫຼື ວິຊາການ ຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ ເປັນຄະນະ;

4. ພະນັກງານອື່ນທີ່ກ່ຽວຂ້ອງ ປະກອບເຂົ້າເປັນຄະນະ ເປັນຕົ້ນ ຜູ້ຮັບຜິດຊອບຄົ້ນຄວ້າລະບຽບການ ແລະ ຄຳແນະນຳກ່ຽວກັບການຄວບຄຸມລະບົບສະວິບ, ຕອບແບບສອບຖາມປະເມີນການຄວບຄຸມລະບົບສະວິບ ແລະ ວຽກງານອື່ນຕາມຄວາມເໝາະສົມ.

ຜູ້ທີ່ຖືກແຕ່ງຕັ້ງໃຫ້ເປັນຄະນະຮັບຜິດຊອບຄວບຄຸມລະບົບສະວິບໃນແຕ່ລະຕຳແໜ່ງ ບໍ່ສາມາດຄວບຕຳແໜ່ງອື່ນໃນຄະນະດັ່ງກ່າວ. ຄະນະຮັບຜິດຊອບການຄວບຄຸມລະບົບສະວິບ ຕ້ອງມີຄວາມຮູ້ໃນການຄວບຄຸມລະບົບສະວິບ ຊຶ່ງໄດ້ຮັບການຝຶກອົບຮົມຈາກອົງການສະວິບ, ບໍລິສັດທີ່ປຶກສາ ຫຼື ພະນັກງານຂອງທະນາຄານແຫ່ງ ສປປ ລາວ ທີ່ມີປະສົບການກ່ຽວຂ້ອງ.

### ມາດຕາ 8 ສິດ ແລະ ໜ້າທີ່ ຂອງຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບສູງສຸດ

ຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບສູງສຸດ (Super Administrator) ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳການຄວບຄຸມລະບົບສະວິບ;

2. ສ້າງ ແລະ ລຶບລ້າງ ບັນຊີລະບົບ ຂອງຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບ (System Administrator) ແລະ ຜູ້ບໍລິຫານບັນຊີດ້ານການນຳໃຊ້ລະບົບສະວິບ (Application Administrator);

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງອົງການສະວິບ ແລະ ຂັ້ນເທິງໃນແຕ່ລະໄລຍະ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບ**

ຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບ (System Administrator) ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳການຄວບຄຸມລະບົບສະວິບ ຕາມການມອບໝາຍຂອງຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບສູງສຸດ;

2. ກວດກາ ແລະ ອະນຸມັດ ໃນການຕິດຕັ້ງ, ກວດສອບ ແລະ ບຳລຸງຮັກສາລະບົບສະວິບ;

3. ສ້າງ ແລະ ລຶບລ້າງ ບັນຊີລະບົບຂອງພະນັກງານຜູ້ຄວບຄຸມລະບົບສະວິບ (System User);

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງອົງການສະວິບ ແລະ ຂັ້ນເທິງໃນແຕ່ລະໄລຍະ.

**ມາດຕາ 10 ຄວາມຮັບຜິດຊອບຂອງພະນັກງານຜູ້ຄວບຄຸມລະບົບສະວິບ**

ພະນັກງານຜູ້ຄວບຄຸມລະບົບສະວິບ (System User) ມີຄວາມຮັບຜິດຊອບຄວບຄຸມ ແລະ ບຳລຸງຮັກສາລະບົບສະວິບ ຕາມການຊີ້ນຳຂອງຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບສູງສຸດ ແລະ ຜູ້ບໍລິຫານບັນຊີການຄວບຄຸມລະບົບສະວິບ.

## ໝວດທີ 3
## ການນຳໃຊ້ລະບົບສະວິບ

**ມາດຕາ 11 ການນຳໃຊ້ລະບົບສະວິບ**

ການນຳໃຊ້ລະບົບສະວິບ ແມ່ນການດຳເນີນການ ສົ່ງ, ຮັບ, ແກ້ໄຂ ແລະ/ຫຼື ຍົກເລີກ ຂໍ້ຄວາມສະວິບ ຊຶ່ງປະກອບດ້ວຍ:

1. ຂໍ້ຄວາມສະວິບເພື່ອດຳເນີນທຸລະກຳທາງການເງິນ ເປັນຕົ້ນ ການໂອນ-ຮັບເງິນ, ການຊື້-ຂາຍເງິນຕາຕ່າງປະເທດ, ພັນທະບັດ, ຄຳ ແລະ ທຸລະກຳທາງການເງິນອື່ນໆ ຕາມການເຄື່ອນໄຫວຕົວຈິງຂອງທະນາຄານແຫ່ງ ສປປ ລາວ;

2. ຂໍ້ຄວາມສະວິບເພື່ອສົ່ງ ແລະ/ຫຼື ຮັບຂໍ້ມູນຕ່າງໆ ເປັນຕົ້ນ ຂໍ້ມູນຢັ້ງຢືນຕົວຕົນລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ສະຖາບັນການເງິນຕົວແທນ ແລະ ສະຖາບັນການເງິນຄູ່ຄ້າ ເພື່ອເປີດສາຍພົວພັນ (Relationship Management Authorization = RMA), ການສົ່ງ ແລະ ຮັບ ການຢັ້ງຢືນຍອດເຫຼືອເງິນຝາກ, ການຊອກຮູ້ຂໍ້ມູນລູກຄ້າ (Know Your Customer = KYC) ແລະ ຂໍ້ມູນອື່ນໆ ຕາມການເຄື່ອນໄຫວຕົວຈິງຂອງທະນາຄານແຫ່ງ ສປປ ລາວ.

ການນຳໃຊ້ລະບົບສະວິບ ແມ່ນດຳເນີນໃນໂມງລັດຖະການ, ກໍລະນີມີຄວາມຈຳເປັນຕ້ອງນຳໃຊ້ນອກໂມງລັດຖະການ ຕ້ອງໄດ້ຮັບອະນຸຍາດ ຈາກຜູ້ບໍລິຫານບັນຊີການນຳໃຊ້ລະບົບສະວິບ. ການສົ່ງ, ດັດແກ້ ຫຼື ຍົກເລີກ ເນື້ອໃນຂໍ້ຄວາມສະວິບ ຕ້ອງດຳເນີນການຜ່ານພະນັກງານ ສາມ ຂັ້ນຄື: ຜູ້ສ້າງຂໍ້ຄວາມສະວິບ (Creator), ຜູ້ກວດຂໍ້ຄວາມສະວິບ (Verifier) ແລະ ຜູ້ອະນຸມັດຂໍ້ຄວາມສະວິບ (Authorizer).

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງຜູ້ນຳໃຊ້ລະບົບສະວິບ**

ກົມບໍລິການທະນາຄານ ເປັນຜູ້ນຳໃຊ້ລະບົບສະວິບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳໃຊ້ລະບົບສະວິບ ເປັນຕົ້ນ ສົ່ງ, ຮັບ, ດັດແກ້ ແລະ/ຫຼື ຍົກເລີກ ຂໍ້ຄວາມສະວິບ ເພື່ອດຳເນີນທຸລະກຳທາງການເງິນ ແລະ ແລກປ່ຽນຂໍ້ມູນຕ່າງໆ ລະຫວ່າງທະນາຄານແຫ່ງ ສປປ ລາວ ກັບ ສະຖາບັນການເງິນຄູ່ຄ້າ ແລະ ສະຖາບັນການເງິນຕົວແທນ;

2. ແຕ່ງຕັ້ງ ແລະ ປັບປຸງ ຄະນະຮັບຜິດຊອບນຳໃຊ້ລະບົບສະວິບ;

3. ຄົ້ນຄວ້າສ້າງນິຕິກຳກ່ຽວກັບ ການນຳໃຊ້ລະບົບສະວິບ;

4. ຮັກສາ ແລະ ປ້ອງກັນຂໍ້ມູນທີ່ຕິດພັນກັບການນຳໃຊ້ລະບົບສະວິບ ໃຫ້ເປັນຄວາມລັບ ຊຶ່ງການເປີດເຜີຍຂໍ້ມູນໃຫ້ພາກສ່ວນພາຍນອກ ຕ້ອງໄດ້ຮັບການເຫັນດີຈາກຫົວໜ້າກົມບໍລິການທະນາຄານ;

5. ປະຕິບັດມາດຕະການສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນ ຕົ້ນ ແບບສອບຖາມຊອກຮູ້ຄູ່ຄ້າ (KYC Registry) ແລະ ແບບສອບຖາມຊອກຮູ້ຂໍ້ມູນລູກຄ້າອື່ນໆ;

6. ກວດກາທຸລະກຳທາງການເງິນທີ່ຈະຜ່ານລະບົບສະວິບ ດ້ວຍການນຳໃຊ້ລະບົບກວດລາຍຊື່ຜູ້ທີ່ກ່ຽວຂ້ອງກັບການກໍ່ການຮ້າຍ (SWIFT Sanctions Screening);

7. ສະເໜີຫາກົມເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອສ້າງລະຫັດຜູ້ບໍລິຫານບັນຊີການນຳໃຊ້ (Application Administrator);

8. ກຳນົດຄ່າບໍລິການຕ່າງໆ ໃນການໃຫ້ບໍລິການລະບົບສະວິບຂອງທະນາຄານແຫ່ງ ສປປ ລາວ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການເຫັນດີຂອງຂັ້ນເທິງ.

**ມາດຕາ 13 ຄະນະຮັບຜິດຊອບນຳໃຊ້ລະບົບສະວິບ**

ຄະນະຮັບຜິດຊອບນຳໃຊ້ລະບົບສະວິບ ຖືກແຕ່ງຕັ້ງໂດຍຫົວໜ້າກົມບໍລິການທະນາຄານ ປະກອບມີ:

1. ຜູ້ບໍລິຫານບັນຊີການນຳໃຊ້ລະບົບສະວິບ (Application Administrator) ແມ່ນຄະນະກົມຂອງກົມບໍລິການທະນາຄານ ເປັນຫົວໜ້າຄະນະ;

2. ພະນັກງານຜູ້ນຳໃຊ້ລະບົບສະວິບ (Application User) ປະກອບດ້ວຍ:

- ຜູ້ອະນຸມັດຂໍ້ຄວາມສະວິບ (Authorizer) ແມ່ນຄະນະກົມ ຫຼື ຄະນະພະແນກ ຂອງກົມບໍລິການທະນາຄານ ເປັນຮອງຄະນະ;
- ຜູ້ກວດຂໍ້ຄວາມສະວິບ (Verifier) ແມ່ນວິຊາການຂອງກົມບໍລິການທະນາຄານ ເປັນຄະນະ;
- ຜູ້ສ້າງຂໍ້ຄວາມສະວິບ (Creator) ແມ່ນວິຊາການຂອງກົມບໍລິການທະນາຄານ ເປັນຄະນະ.

3. ພະນັກງານອື່ນທີ່ກ່ຽວຂ້ອງ ປະກອບເຂົ້າເປັນຄະນະ ເປັນຕົ້ນ ຜູ້ຮັບຜິດຊອບຄົ້ນຄວ້າຄຳແນະນຳ ແລະ ຄູ່ມືທີ່ກ່ຽວຂ້ອງກັບການນຳໃຊ້ລະບົບສະວິບ, ຕອບແບບສອບຖາມຊອກຮູ້ຂໍ້ມູນລູກຄ້າ ແລະ ວຽກງານອື່ນຕາມຄວາມເໝາະສົມ.

ຜູ້ທີ່ຖືກແຕ່ງຕັ້ງໃຫ້ເປັນຄະນະຮັບຜິດຊອບນຳໃຊ້ລະບົບສະວິບໃນແຕ່ລະຕຳແໜ່ງ ບໍ່ສາມາດຄວບຕຳແໜ່ງອື່ນໄດ້ໃນຄະນະດັ່ງກ່າວ. ຄະນະຮັບຜິດຊອບນຳໃຊ້ລະບົບສະວິບ ຕ້ອງມີຄວາມຮູ້ໃນການນຳໃຊ້ລະບົບສະວິບ ຊຶ່ງໄດ້ຮັບການຝຶກອົບຮົມຈາກອົງການສະວິບ, ບໍລິສັດທີ່ປຶກສາ ຫຼື ເປັນພະນັກງານ ທີ່ມີປະສົບການໃນວຽກງານດັ່ງກ່າວ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງຜູ້ບໍລິຫານບັນຊີການນຳໃຊ້ລະບົບສະວິບ**

ຜູ້ບໍລິຫານບັນຊີການນຳໃຊ້ລະບົບສະວິບ (Application Administrator) ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳການນຳໃຊ້ລະບົບສະວິບ;
2. ສ້າງ ແລະ ລຶບລ້າງບັນຊີສະວິບຂອງພະນັກງານຜູ້ນຳໃຊ້ລະບົບສະວິບ (Application User);
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມມາດຕະຖານຂອງອົງການສະວິບ ແລະ ຂັ້ນເທິງກຳນົດແຕ່ລະໄລຍະ.

**ມາດຕາ 15 ຄວາມຮັບຜິດຊອບຂອງພະນັກງານຜູ້ນຳໃຊ້ລະບົບສະວິບ**

ພະນັກງານຜູ້ນຳໃຊ້ລະບົບສະວິບ (Application User) ມີຄວາມຮັບຜິດຊອບ ດັ່ງນີ້:

1. ຜູ້ສ້າງຂໍ້ຄວາມສະວິບ ຮັບຜິດຊອບສ້າງຂໍ້ຄວາມສະວິບ ເພື່ອສົ່ງ, ດັດແກ້, ແລະ/ຫຼື ຍົກເລີກ ເນື້ອໃນການດຳເນີນທຸລະກຳທາງການເງິນ ແລະ ແລກປ່ຽນຂໍ້ມູນຕ່າງໆ ແລ້ວສົ່ງຕໍ່ໃຫ້ຜູ້ກວດສອບຂໍ້ຄວາມສະວິບ;
2. ຜູ້ກວດຂໍ້ຄວາມສະວິບ ຮັບຜິດຊອບກວດກາເນື້ອໃນຂໍ້ຄວາມສະວິບ ໂດຍສົມທຽບກັບລາຍລະອຽດທຸລະກຳທາງການເງິນ ແລະ ແລກປ່ຽນຂໍ້ມູນຕ່າງໆອີງໃສ່ເອກະສານທີ່ກ່ຽວຂ້ອງ ກ່ອນສົ່ງຕໍ່ໃຫ້ຜູ້ອະນຸມັດຂໍ້ຄວາມສະວິບ;
3. ຜູ້ອະນຸມັດຂໍ້ຄວາມສະວິບ ຮັບຜິດຊອບກວດກາ ແລະ ອະນຸມັດຂັ້ນສຸດທ້າຍໃນການສົ່ງ, ດັດແກ້ ແລະ/ຫຼື ຍົກເລີກ ຂໍ້ຄວາມສະວິບ ເພື່ອດຳເນີນທຸລະກຳທາງການເງິນ ແລະ ແລກປ່ຽນຂໍ້ມູນຂ່າວສານໃຫ້ ສະຖາບັນການເງິນຕົວແທນ ແລະ/ຫຼື ສະຖາບັນການເງິນຄູ່ຄ້າ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 16 ຂໍ້ຫ້າມ**

ຫ້າມຄະນະຮັບຜິດຊອບຄວບຄຸມ ແລະ ນຳໃຊ້ລະບົບສະວິບ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ລະບົບສະວິບ ເພື່ອດຳເນີນທຸລະກຳທາງການເງິນ ຫຼື ແລກປ່ຽນຂໍ້ມູນຂ່າວສານ ທີ່ຂັດກັບກົດລະບຽບພາຍໃນ ຂອງທະນາຄານແຫ່ງ ສປປ ລາວ ແລະ ລະບຽບການກ່ຽວຂ້ອງ;
2. ນຳໃຊ້ ຊື່ ແລະ ລະຫັດຜ່ານ ຂອງຜູ້ອື່ນເຂົ້າລະບົບສະວິບ;
3. ເປີດເຜີຍຂໍ້ມູນການຄວບຄຸມ ແລະ ການນຳໃຊ້ລະບົບສະວິບ ຍົກເວັ້ນໄດ້ຮັບອະນຸຍາດຈາກຂັ້ນເທິງ;
4. ມີພຶດຕິກຳອື່ນ ທີ່ສ້າງຄວາມເສຍຫາຍໃຫ້ລະບົບສະວິບ.

**ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ**

ຜູ້ຄວບຄຸມ ແລະ ຜູ້ນຳໃຊ້ ລະບົບສະວິບ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດຕາມມາດຕະການຕາມກົດໝາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ກົມບໍລິການທະນາຄານ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ★ ຜູ້ວ່າການ

ສອນໄຊ ສິດພະໄຊ